# ໂຮງຮຽນວັນອາທິດ

**ວັນອາທິດ ທີ 29 ເດືອນມີນາ 2020 (03- 29 - 2020 )**

---

## ເຮັດໃຫ້ບໍຣິສຸດ.

ເຕີບໃຫຍ່ຂຶ້ນ, ປື້ມອ່ານເດັກນ້ອຍອັນໃດທີ່ທ່ານມັກ?

ຊົງແຍກເຮົາໄວ້ໃຫ້ດໍາລົງຊີວິດບໍຣິສຸດໃນພຣະຄຣິສ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ທ່ານມີຄວາມຄຸ້ນເຄີຍກັບປື້ມເຣື່ອງຕົວບົ້ງກືທີ່ຫິວອາຫານຫຼາຍບໍ່? ພວກລູກຂອງຂ້າພະເຈົ້າຮູ້ດີເພາະວ່າພັນລະຍາຂອງຂ້າພະເຈົ້າແລະຂ້າພຣະເຈົ້າມັກອ່ານປື້ມໃຫ້ພວກເຂົາຟັງ ເຣື່ອງບົ້ງກືມີຄວາມຫິວກິນບໍ່ຮູ້ຈັກອີ່ມທ້ອງ. ແຕ່ວັນນຶ່ງທຸກສິ່ງໄດ້ປ່ຽນໄປ, ມັນບໍ່ໄດ້ຄືບຄານໄປໃນພື້ນດິນແຫ່ງໃດແຫ່ງນຶ່ງຕໍ່ໄປຫຼືມັນບໍ່ຮູ້ສຶກຫິວອີກ. ແທນທີ່ຈະ, ມັນສິນທ້ອງແລະມີປີກທີ່ຈະບິນ. ຈາກນັ້ນຜູ້ຂຽນໄດ້ບັນລະຍາຍວ່າມັນບໍ່ໄດ້ຖືກສ້າງຂຶ້ນມາເພື່ອເປັນບົ້ງກືຢູ່ຢ່າງນັ້ນ: ມັນຖືກສ້າງໃຫ້ກາຍມາເປັນແມ່ງກະເບື້ອທີ່ສວຍງາມ.

ຂ້າພະເຈົ້າເຫັນອີກເຫັນໃຈບົ້ງກືແລະບາງທີທ່ານກໍເຮັດຄືກັນກັບບົ້ງກືນີ້, ພວກເຮົາບໍ່ໄດ້ຖືກອອກແບບມາເພື່ອໃຫ້ມີຄວາມຫິວແລະຜິດທ້ອງ. ພວກເຮົາຖືກອອກແບບໃຫ້ດໍາລົງຊີວິດໃນຄວາມສໍາພັນກັບພຣະເຈົ້າໂດຍຜ່ານທາງການສິ້ນພຣະຊົນຂອງພຣະຄຣິສ. ພວກເຮົາຖືກອອກແບບໃຫ້ດໍາລົງຊີວິດທີ່ແຍກອອກຈາກທາງແຫ່ງໂລກ; ພວກເຮົາຕັ້ງໃຈໃຫ້ກາຍເປັນສິ່ງທີ່ມີຄ່າຍິ່ງໃຫຍ່ກ່ວາເກົ່າ.

ໃນ 1 ໂກລິນໂທ 6, ໂປໂລຄົ້ນຫາທາງທີ່ຈະຊ່ວຍໃຫ້ພວກເຮົາໄດ້ເຂົ້າໃຈການພັດທະນາແນວທາງການຖືກແຍກອອກຈາກວິທີຂອງໂລກ. ນັ້ນແມ່ນສິ່ງທີ່ມັນມີຄວາມໝາຍວ່າຖືກເຮັດໃຫ້ບໍຣິສຸດ.

**ພຣະຄໍາພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

**<u>ສຶກສາພຣະຄັມພີ</u>**

**1. 1 ໂກລິນໂທ 6: 9- 11**

9ເຈົ້າທັງຫຼາຍບໍ່ຮູ້ຫຼືວ່າຄົນອະທັມຈະບໍ່ມີສ່ວນໃນຣາຊະອານາຈັກຂອງພຣະເຈົ້າຢ່າເຂົ້າໃຈຜິດວ່າຄົນຫຼິ້ນຊູ້ກໍ່ດີ, ຫຼືຄົນ
ຂາບໄຫວ້ພຣະທຽມ, ຄົນຜິດຈາກຜົວເມັຽກັນ, ຊາຍຫຼິ້ນຄືຍິງ, ຊາຫຼິ້ນກັບຊາຍ, 10ຄົນຂະໂມຍ, ຄົນໂລບ, ຄົນຂີ້ເຫຼົ້າ,
ຄົນເປົ້າຫຍາບຊ້າ, ຄົນຂົ່ມຂູ້ກໍ່ດີ ຈະບໍ່ໄດ້ຮັບສ່ວນໃນຣາຊະອານາຈັກຂອງພຣະເຈົ້າ. 11ເມື່ອກ່ອນມີບາງຄົນໃນພວກ
ເຈົ້າເປັນຄົນຢ່າງນັ້ນ ແຕ່ເຈົ້າທັງຫຼາຍໄດ້ຮັບການຊົງຊໍາຣະແລ້ວ, ໄດ້ຖືກຊົງຕັ້ງໄວ້ສໍາລັບພຣະເຈົ້າແລ້ວ, ໄດ້ຖືກຊົງນັບ
ເປັນຄົນຊອບທໍາໃນພຣະນາມຂອງພຣະເຢຊູຄຣິສເຈົ້າ ແລະໂດຍພຣະວິນຍານແຫ່ງພຣະເຈົ້າຂອງພວກເຮົາ.

ໃນເບື້ອງຕົ້ນ( ໃນຂໍ້9- 16) ພວກເຮົາໄດ້ຮັບຄວາມເຂົ້າໃຈກ່ຽວກັບຄໍາວ່າບໍຣິສຸດ, ເປັນຄໍາເວົ້າທີ່ມີຄຸນຄ່າຢ່າງສູງນໍາມາໃຊ້ກັບພຣະເຈົ້າຜູ້ທີ່ຖືກຍົກສູງໄວ້ຕ່າງຫາກ, ແຍກໄວ້ຕ່າງຫາກ, ແລະການເປັນນຶ່ງດຽວຈາກການຊົງສ້າງຂອງພຣະອົງ. ແຕ່ບໍ່ແມ່ນພຣະເຈົ້າພຽງຜູ້ດຽວທີ່ບໍຣິສຸດ; ໃນຖານະທີ່ເປັນລູກຂອງພຣະເຈົ້າ, ພວກເຮົາເປັນຄົນບໍຣິສຸດແລະຖືກແຍກອອກຈາກໂລກທີ່ຢູ່ອ້ອມຮອບພວກເຮົາ. ຊີວິດຄຣິສຕຽນແມ່ນຊີວິດທີ່ເຕີບໃຫຍ່ໃນການເຮັດໃຫ້ບໍຣິສຸດ.

ຄວາມງົດງາມຂອງການທີ່ຖືກເຮັດໃຫ້ບໍຣິສຸດແລະການຖືກແຍກອອກໃນພຣະຄຣິສ ຄືບໍ່ໃຫ້ເຮົາຕົກເປັນທາດຂອງຄວາມບາບອີກຕໍ່ໄປເມື່ອພວກເຮົາຢູ່ໃນພຣະອົງ. ເມື່ອພວກເຮົາຢູ່ໃນພຣະຄຣິສ, ພຣະບິດາໄດ້ເຫັນພວກເຮົາເປັນຄົນຊອບທໍາ; ໂປໂລໄດ້ລະບຸລາຍການບາບບາງຢ່າງແລະເຕືອນຄຣິສຕຽນວ່າ, " ໃນພວກທ່ານເຄີຍເປັນຢ່າງນັ້ນມາກ່ອນ." ມັນເປັນຄໍາເຕືອນທີ່ຖ່ອມຕົວວ່າພວກເຮົາໄດ້ຮັບການໄຖ່ດ້ວຍຄວາມເຊື່ອຂອງເຮົາ ທີ່ໄດ້ເຊື່ອໃນພຣະຄຣິສ.

ໂປໂລຍັງໄດ້ສິ່ງຄໍາເຕືອນວ່າຊີວິດຂອງພວກເຮົາບໍ່ຄວນຈະດໍາລົງຊີວິດຕາມແບບວິທີການດໍາເນີນຊີວິດເກົ່າຂອງພວກເຮົາ. ພວກເຮົາໄດ້ເປັນຜູ້ບໍລິສຸດແລະຖືກແຍກອອກຈາກວິຖີຊີວິດເກົ່າ. ພວກເຮົາຈະເຫັນຄວາມຕາຍໃນບາບເທົ່ານັ້ນ, ແຕ່ພວກເຮົາຈະພົບເຫັນຊີວິດໃໝ່ໃນພຣະຄຣິສ. ເມື່ອພວກເຮົາເຂົ້າມາຫາພຣະຄຣິສ, ທຸກສິ່ງທຸກຢ່າງປ່ຽນແປງ!
ໂປໂລໃຊ້ສາມຂໍ້ຄໍາທີ່ສໍາຄັນເພື່ອອະທິບາຍການປ່ຽນແປງໃນັ້ນ:

- **ຊໍາຣະລ້າງ.** ພວກເຮົາຖືກຊໍາຣະລ້າງໃຫ້ສະອາດຈາກບາບຂອງພວກເຮົາໂດຍຜ່ານທາງຄວາມເຊື່ອໃນພຣະຄຣິສ. ( 1 ໂຢຮັນ 1:7) "ພຣະໂລຫິດຂອງພຣະເຢຊູພຣະບຸດຂອງພຣະອົງ ກໍຊໍາຣະລ້າງເຮົາທັງຫລາຍຈາກຜິດບາບໝົດສິ້ນ".

- **ເຮັດໃຫ້ບໍຣິສຸດ.** ພຣະເຈົ້າປະກາດວ່າພວກເຮົາ ບໍຣິສຸດ. ແລະໂດຍນໍ້າພຣະທັຍນັ້ນແຫລະ, ທີ່ເຮົາທັງຫລາຍໄດ້ຮັບການຊົງຊໍາຣະໃຫ້ບໍຣິສຸດ ດ້ວຍການຖວາຍພຣະກາຍຂອງພຣະເຢຊູຄຣິດເທື່ອດຽວເທົ່ານັ້ນ ເປັນການສິ້ນສຸດ( ເຮັບເຣີ 10: 10).
- **ສະແດງຄວາມບໍຣິສຸດ.** ພວກເຮົາຖືກຖືວ່າເປັນຄົນຊອບທໍາໃນສາຍພຣະເນດຂອງພຣະເຈົ້າ. ເຫດສັນນັ້ນເຮົາຈຶ່ງເປັນທູດຂອງພຣະຄຣິດ ໂດຍທີ່ພຣະເຈົ້າຊົງຂໍຮ້ອງເຈົ້າທັງຫລາຍທາງເຮົາ ເຮົາຈຶ່ງຂໍຮ້ອງພວກເຈົ້າໃນນາມຂອງພຣະຄຣິດວ່າ "ຈົ່ງຍອມໃຫ້ພຣະເຈົ້າຊົງກະທໍາໃຫ້ເຈົ້າຄືນດີກັນກັບພຣະອົງເຫີນ"( 2 ໂກຣິນໂທ 5: 21).

ເຫດການທັງໝົດນີ້ປາກົດຂຶ້ນທັນທີທີ່ໄດ້ຮັບຄວາມລອດ, ໃນເວລາທີ່ພວກເຮົາເຊື່ອແລະວາງໃຈໃນພຣະຄຣິສ, ຜູ້ທີ່ມີຊີວິດສົມບູນແບບ, ໄດ້ຕາຍໃນຄວາມບາບຂອງຄົນບາບເພື່ອເອົາບາບຂອງພວກເຮົາໄປ, ແລະຟື້ນຄືນພຣະຊົນເພື່ອໃຫ້ພວກເຮົາມີຊີວິດໃໝ່. ການສະແດງຄວາມບໍຣິສຸດແມ່ນເຫດການນຶ່ງທີ່ໃຊ້ເວລາ, ແຕ່ການສະແດງໃຫ້ເຫັນຄວາມບໍຣິສຸດແມ່ນຈະຕ້ອງຜ່ານຂະບວນການຊີວິດປະຈໍາວັນ. ການຊໍາລະໃຫ້ບໍຣິສຸດຂອງພວກເຮົາໄດ້ເລີ້ມຕົ້ນຂຶ້ນໃນເວລາທີ່ຕັດສິນໃຈຍອມຮັບ. ແຕ່ມັນດໍາເນີນການໄປຕະລອດຊົ່ວຊີວິດຂອງພວກເຮົາໃນຂະນະທີ່ພວກເຮົາເຕີບໃຫຍ່ຂຶ້ນເລື້ອຍໆໃນພຣະຄຣິສ.

## 2. 1 ໂກຣິນໂທ 6: 12- 17

[12]"ເຮົາເຮັດສິ່ງສາພັດໄດ້ລະ ບໍ່ມີໃຜຫ້າມ" ແຕ່ບໍ່ແມ່ນທຸກສິ່ງທີ່ໄດ້ເຮັດນັ້ນມີປະໂຫຍດ "ເຮົາເຮັດສິ່ງສາພັດໄດ້ລະ ບໍ່ມີ
ໃຜຫ້າມ" ແຕ່ວ່າຝ່າຍເຮົາຈະບໍ່ຍອມຢູ່ໃຕ້ອໍາ.ນາດຂອງສິ່ງໃດ [13]ອາ-ລັບອາລັບທ້ອງແລະທ້ອງກໍສໍາຫານມີໄວ້ສໍາ
ຫານ ແຕ່ພຣະເຈົ້າຈະຊົງໃຫ້ທັງທ້ອງແລະອາຫາຍໄປຫານສູນ ສ່ວນຮ່າງລັບການຫລິ້ນຊູ້ກາຍນັ້ນບໍ່ໄດ້ມີໄວ້ສໍາ ແຕ່ມີ
ໄວ້ສໍາເຈົ້າເປັນຜູ້ລັບອົງພຣະ ແລະອົງພຣະ.ກາຍລັບຮ່າງເຈົ້າກໍມີໄວ້ສໍາເປັນຜູ້ [14]ພຣະ-ຜູ້ດານໃຫ້ອົງພຣະເຈົ້າໄດ້ຊົງບັນ
ເຈົ້າຄືນຂຶ້ນມາເປັນ ແລະພຣະຫລາຍຄືນມາໃໝ່ດານໃຫ້ເຮົາທັງອົງຈະຊົງບັນ ດ້ວຍລິດອໍາ.ອົງນາດຂອງພຣະ [15]ເຈົ້າທັງ-
ຄຣິດກາຍຂອງພວກເຈົ້າເປັນອະໄວຍະວະຂອງພຣະຫລາຍບໍ່ຮູ້ຫລືວ່າຮ່າງ ຖ້າເປັນຢ່າງນັ້ນເຮົາຈະເອົາອະໄວຍະວະ
ຂອງ ພຣະຄຣິດ ໄປເປັນອະໄວຍະວະຂອງຍິງແມ່ຈ້າງຫລື ຢ່າໃຫ້ເປັນຢ່າງນັ້ນເລີຍ. [16]ເຈົ້າທັງຫລາຍບໍ່ຮູ້ຫລືວ່າຜູ້ທີ່ຕິດ
ຈ້າງກໍເປັນກາຍອັນພັນກັບຍິງແມ່ດຽວກັບຍິງນັ້ນ ເພາະພຣະເຈົ້າໄດ້ຊົງກ່າວໄວ້ວ່າ, "ເຂົາທັງສອງຈະເປັນກາຍອັນ
ດຽວ." [17]ແຕ່ຜູ້ທີ່ຕິດພັນກັບອົງພຣະເຈົ້າເປັນຜູ້ ກໍເປັນຈິດ.ອົງໃຈອັນດຽວກັບພຣະ

ໂປໂລໄດ້ເຕືອນຊາວໂກຣິນໂທວ່າພວກເຂົາໄດ້ຮັບການໄຖ່ໃນພຣະຄຣິສ. ພວກເຮົາໄດ້ຮັບການປົດປ່ອຍໃຫເປັນອິດສຣະໃນພຣະຄຣິສ, ແຕ່ຊາວໂກຣິນໂທໄດ້ຕີຄວາມໝາຍເສລີພາບນັ້ນຜິດໄປ. ໂປໂລໄດ້ອ້າງເຖິງຄຳເວົ້າຂອງຄຳຂັວນຂອງພວກເຂົາເຖິງສອງຄັ້ງ " ທຸກສິ່ງສາລະພັດໄດ້ບໍ່ມີໃຜຫ້າມ" ( ຂໍ້ 12)ແຕ່ທັງສອງຄັ້ງທ່ານໄດ້ເວົ້າຄວາມຈິງທີ່ຜິດຕໍ່ຄວາມໝາຍຂອງຄຳຂັວນນັ້ນ: " ບໍ່ແມ່ນທຸກສິ່ງຈະເປັນປະໂຫຍດ" ແລະ "ແຕ່ວ່າຝ່າຍເຮົາຈະບໍ່ຍອມຢູ່ໃຕ້ອຳນາດຂອງ .ສິ່ງໃດເລີຍ."

ໃນຕອນຕົ້ນ, ໂປໂລໄດ້ຂຽນຈົດໝາຍໄປຫາຄຣິສຈັກຕ່າງໆໃນຄາລາເຕັຽ: " ເສຣີພາບ, ພຣະຄຣິສໄດ້ໄຖ່ເຮົາໃຫ້ມີອິດສຣະ" ( ຄາລາເຕັຽ 5: 1). ພຣະອົງໄດປົດປ່ອຍພວກເຮົາໃຫ້ພົ້ນຈາກການເປັນທາດຂອງຄວາມບາບ. ພວກເຮົາມີອິດສຣະບໍ່ໄດ້ທີ່ຈະເຮັດບາບ, ແຕ່ມີບາງຄົນໃນຄຣິສຈັກເມືອງໂກຣິນໂທໄດ້ໃຊ້ເສລີພາບນັ້ນຢ່າງບໍ່ຖືກຕ້ອງໝາຍຄວາມວ່າພວກເຂົາມີເສລີພາບໃນການເຮັດບາບ. ໂດຍສະເພາະ, ບາງຄົນໃນຄຣິສຈັກໂກຣິນໂທໄດ້ສວຍໃຊ້ຂອງປະທານໄປໃນການຜິດທາງເພດແລະການເຮັດຜິດສິນລະທຳທາງເພດ, ພວກເຂົາເຊື່ອວ່າທັງອາຫານແລະເພດແມ່ນເປັນພຽງແຕ່ຈຸດປະສົງສຳລັບຮ່າງກາຍຂອງພວກເຂົາແລະດັ່ງນັ້ນຈຶ່ງບໍ່ມີຜົນຕໍ່ຊີວິດຝ່າຍວິນຍານຂອງພວກເຂົາ.

ນັ້ນຄືຜູ້ທີ່ຖືວ່າຄວາມຮູ້ເປັນທາງນຳຊູ່ການມີອິດທິພົນຕໍ່ຫຼາຍໆຄົນໃນຄຣິສຈັກໂກຣິນໂທ, ແຕ່ໂປໂລໄດ້ກ່າວຕໍ່ສູ້ພວກເຂົາ. ພວກເຮົາບໍ່ສາມາດແຍກຮ່າງກາຍ ແລະຈິດວິນຍານໄດ້. ຮ່າງກາຍຝ່າຍເນື້ອໜັງຂອງພວກເຮົາເປັນຂອງພຣະຄຣິສເທົ່າໆກັນກັບວິນຍານຂອງພວກເຮົາ.ຜູ້ທີ່ເຊື່ອແມ່ນເປັນນຶ່ງດຽວກັນກັບພຣະຄຣິສ, ແລະການແຕ່ງງານເປັນຮູບພາບສະແດງເຖິງຄວາມເປັນນຶ່ງດຽວກັນກັບທີ່ພວກເຮົາມີສ່ວນຮ່ວມກັນກັບພຣະຄຣິສໃນຖານະເປັນຄຣິສຈັກຂອງພຣະອົງ ( ເອເຟໂຊ 5: 22-23). ໃນການແຕ່ງງານ, ຜູ້ຊາຍແລະຜູ້ຍິງກາຍເປັນເນື້ອກາຍດຽວກັນ; ໃນທຳນອງດຽວກັນ, ເມື່ອພວກເຮົາເຂົ້າມາເປັນຜູ້ເຊື່ອ, ພວກເຮົາໄດ້ເຂົ້າເປັນສ່ວນຮ່ວມກັບພຣະຜູ້ເປັນເຈົ້າໂດຍຜ່ານທາງພຣະວິນຍານບໍຣິສຸດ. ດ້ວຍເຫດນັ້ນ, ການກະທຳທາງດ້ານເນື້ອກາຍຈຶ່ງສົ່ງຜົນກະທົບຕໍ່ຄວາມເປັນມະນຸດຂອງພວກເຮົາ.

ຄວາມຈິງນີ້ຊີ້ແຈງໃຫ້ເຫັນວິທີທີ່ພວກເຮົາຖືກແຍກອອກຈາກໂລກ. ພວກເຮົາບໍ່ໄດ້ເປັນນຶ່ງດຽວກັນກັບໂລກແລະຄ່ານິຍົມຂອງໂລກ; ພວກເຮົາເປັນນຶ່ງດຽວກັນກັບພຣະຄຣິສ. ເນື່ອງຈາກວ່າພວກເຮົາເປັນນຶ່ງດຽວກັບພຣະຄຣິສແລະພຣະວິນຍານບໍຣິສຸດຂອງພຣະອົງຊົງສະຖິດຢູ່ກັບພວກເຮົາ, ການກະທຳຂອງພວກເຮົາສະທ້ອນໃຫ້ເຫັນສິ່ງນັ້ນ. ຮ່າງກາຍພວກເຮົາແຕ່ລະຄົນເປັນພຣະວິຫານຂອງພຣະວິນຍານບໍຣິສຸດ ( 1 ໂກຣິນໂທ 6: 19).

ກັບຄືນມາເບິ່ງການສົນທຽບເລື້ອງການແຕ່ງງານ, ພວກເຮົາຮັບຮູ້ເຖິງໜ້າທີ່ຮັບຜິດຊອບອັນໜັກໜ່ວງຂອງການດຳຣົງຢູ່ຮ່ວມກັນກັບຄູ່ສົມລົດ, ຄວາມສຸກທີ່ເລິກເຊິ່ງປະກອບດ້ວຍຄຳໝັ້ນສັນຍາ. ຊີວິດຂອງຜົວຫຼືເມັຽກ່ອນແຕ່ງງານບໍ່ຄືກັບຫຼັງແຕ່ງງານ; ຜົວຫຼືເມັຽແມ່ນໃຊ້ຊີວິດຢູ່ຮ່ວມກັນ, ມັນຄືກັບຄວາມສຳພັນຂອງເຮົາກັບພຣະຄຣິສ. ພວກເຮົາໄດ້ເຂົ້າຮ່ວມກັບພຣະຄຣິສແລະໄດ້ຖືກແຍກໄວ້ສຳລັບແຜນການຂອງພຣະອົງ.

### 3 1 ໂກຣິນໂທ 6: 18– 20

"ຈົ່ງຫລີກຫນີເສັຽຈາກການຫລິ້ນຊູ້ ຜິດບາບທຸກຢ່າງທີ່ມະນຸດເຮັດນັ້ນເປັນບາບນອກກາຍ ແຕ່ຜູ້ທີ່ຫລິ້ນຊູ້ນັ້ນກໍເຮັດຜິດບາບຕໍ່ຮ່າງກາຍຂອງຕົນເອງເຈົ້າທັງຫລາຍບໍ່ຮູ້ຫລືວ່າຮ່າງກາຍຂອງເຈົ້າເປັນວິຫານຂອງພຣະວິນຍານບໍຣິສຸດ ຜູ້ຊຶ່ງຊົງສະຖິດຢູ່ໃນພວກເຈົ້າຊຶ່ງພວກເຈົ້າໄດ້ຮັບຈາກພຣະເຈົ້າ ເຈົ້າບໍ່ແມ່ນເຈົ້າຂອງຕົວເອງພຣະເຈົ້າໄດ້ຊົງຊື້ເຈົ້າທັງຫລາຍໄວ້ແລ້ວດ້ວຍຣາຄາສູງ ເຫດສັນນັ້ນຈົ່ງຖວາຍພຣະກຽດຕໍ່ພຣະເຈົ້າດ້ວຍຮ່າງກາຍຂອງຕົນ" ໃນຂໍ້ 12- 17, ໂປໂລໄດ້ກ່າວເນັ້ນວ່າສິ່ງໃດກໍຕາມທີ່ເຮົາທຳລາຍຮ່າງກາ ເຊັ່ນ: ບາບທາງເພດຫາກຖືວ່າບໍ່ໄດ້ສຳຄັນ ນັ້ນຕອ້ງໄດ້ແກ້ໄຂໂດຍ " ຫຼີກໜີຈາດການຜິດປະເວນີ!" ຫຼີກໜີໝາຍຄວາມວ່າຕ້ອງໜີ, ໄປໃຫ້ໄກເທົ່າທີ່ຈະໄກໄດ ແລະຕ້ອງເຮັດໃນທັນທີທັນໃດ!

ໃນການພິຈາລະນາການລໍ້ລວງ, ມັນເປັນສິ່ງທີ່ຈຳເປັນຕ້ອງພິຈາລະນາສິ່ງທີ່ພວກເຮົາແລ່ນໄປຫາ. ພວກເຮົາບໍ່ສາມາດຫຼີບ ຫຼີກໜີຈາກຄວາມບາບ, ແຕ່ຈຳຕ້ອງແລ່ນໄປຫາພຣະຄຣິສ. ພວກເຮົາຕ້ອງແນ່ໃຈດຳເນີນຊີວິດບໍລິສຸດ.ພຣະເຈົ້າຊົງ ໄດ້ຮັບກຽດຕິຍົດເມື່ອເຮົາສະແຫວງຫາທາງຂອງພຣະເຈົ້າແລະດຳລົງຊີວິດບໍລິສຸດ. ພຣະອົງໄດ້ເອີ້ນພວກເຮົາອອກ ຈາກການບາບຂອງພວກເຮົາໃຫເປັນເປັນໄພ່ພົນຂອງພຣະອົງ, ດ້ວຍເຫດນີ້, ການເລືອກຂອງພວກເຮົາທັງໝົດຄວນ ນຳເອົາກຽດສະງ່າຣາສີມາສູ່ພຣະເຈົ້າ. ພຣະເຈົ້າຊົງເລືອກພວກເຮົາມາເປັນສາວົກແລະໄດ້ຮຽກເອີ້ນພວກເຮົາອອກ ຈາກຄວາມມືດ, ພວກເຮົາຄວນປະກາດກຽດຕິຍົດແລະສະງ່າລາສີຂອງພຣະອົງດ້ວຍຄວາມຊົມຊື່ນຍິນດີ.

ໃນຂະນະທີ່ພວກເຮົາເພິ່ງອາໃສພຣະວິນຍານທີ່ຊົງສະຖິດຢູ່ນັ້ນ, ຂໍ້ໃຫ້ພວກເຮົາຈຳໄວ້ວ່າຣາຄາທີ່ພຣະເຈົ້າໄດ້ຈ່າຍ ເພື່ອໄຖ່ພວກເຮົາແລະນຳພາພວກເຮົາມາຫາພຣະອົງເອງ. ພວກເຮົາຈະໃຫ້ຄຸນຄ່າແລະທະນຸທະໜອມຫຼາຍຂຶ້ນກັບ ສິ່ງທີ່ພວກເຮົາຊື້ມັນມາດ້ວຍຣາຄາແພງ. ໃນຂອບເຂດຄວາມຍິ່ງໃຫ່ຍທີ່ສຸດ, ພຣະເຈົ້າເລືອກທີ່ຈະຊື້ເອົາທ່ານແລະຂ້າ ພະ

ເຈົ້າໃນລາຄາທີ່ແພງທີ່ສຸດສຳລັບພຣະອົງ: ການຕາຍຂອງພຣະບຸດຂອງພຣະອົງ. ພວກເຮົາມີສະ ຕິປັນຍາທີ່ຈະເອົາໃຈໃສ່ເປັນພິເສດຕໍ່ສິ່ງທີ່ເປັນຂອງພຣະເຈົ້າ; ເຊິ່ງລວມທັງວິນຍານແລະຮ່າງກາຍຂອງເຮົາທັງໝົດ. ໃນການຍອມຕໍ່ພຣະຄຣິສ, ພວກເຮົາຍອມຢູ່ໃຕ້ພຣະວິນຍານ, ຈິດວິນຍານ, ແລະຮ່າງກາຍ. ພວກເຮົາຖືກແຍກອອກ ຖືກເຮັດໃຫ້ບໍລິສຸດໃນພຣະຄຣິສ, ແລະຮ່າງກາຍຂອງພວກເຮົາບໍ່ໄດ້ຖືກໃຊ້ເປັນເຄື່ອງມືສຳລັບຄວາມບາບ ອີກຕໍ່ໄປ. ແທນທີ່, ຮ່າງກາຍຂອງພວກເຮົາເປັນພາສະນະໃຊ້ເພື່ອສັນເສີນພຣະຄຣິສ. ເມື່ອພວກເຮົາຍອມຢູ່ໃຕ້ພຣະ ຄຣິສທຸກໆວັນ, ແລະໃຫ້ພຣະວິນຍານບໍລິສຸດຂອງພຣະອົງຊົງສະຖິດຢູ່ໃນພວກເຮົາ, ພວກເຮົາກໍ່ຢູ່ໃນເສັ້ນທາງແຫ່ງ ການສຳລະໃຫ້ບໍລິສຸດ. ການດຳລົງຊີວິດທີ່ບໍລິສຸດຢູ່ເພື່ອພຣະຄຣິສບໍ່ມີສິ່ງອື່ນໃດນອກເໜືອຈາກການສັນລະເສີນ ພຣະອົງ!

## ບົດຮຽນແຫ່ງຊີວິດ.

**ພວກເຮົາຈະຕ້ອງເລືອກທີ່ຈະເຮັດໃຫ້ຊີວິດປະຈຳວັນບໍລິສຸດ. ຈົ່ງພິຈາລະນາເບິ່ງນຶ່ງຂັ້ນຕອນຄຳແນະນຳຂ້າງລຸ່ມ ນີ້.**

- **ໃຫ້ຂອບພຣະຄຸນ.** ຊີວິດຂອງທ່ານໄດ້ປ່ຽນແປງຍ້ອນພຣະຄຣິສ, ຂອບຄຸນພຣະອົງທີ່ປົດປ່ອຍອອກຈາກວິທີ ທາງການດຳເນີນຊີວິດແບບເກົ່າ. ອະທິຖານຂໍໃຫ້ພຣະຜູ້ເປັນເຈົ້າສືບຕໍ່ທຳງານໃນຊີວິດຂອງທ່ານ.
- **ຈົດຈຳ.** ທ່ອງຈຳ 1 ໂກຣິນໂທ 6: 19- 20 ແລະທ່ອງຈຳຢູ່ເປັນປະຈຳໃຫ້ກັບຕົວເອງເມື່ອທ່ານຕ້ອງການຫຼີກ ໜີຈາກການລໍ້ລວງ. "ເຈົ້າທັງສຸດລິບໍຍານວິນທານຂອງພຣະກາຍຂອງເຈົ້າເປັນວິຫລາຍບໍ່ຮູ້ຫລືວ່າຮ່າງ ຜູ້ຊຶ່ງ ຊົງສະເຈົ້າຖິດຢູ່ໃນພວກເຈົ້າຊຶ່ງພວກເຈົ້າໄດ້ຮັບຈາກພຣະ ເຈົ້າບໍ່ແມ່ນເຈົ້າຂອງຕົວເຈົ້າເອງ. ພຣະເຈົ້າໄດ້ຊົງ ຄາສູງຫລາຍໄວ້ດ້ວຍລາຊື້ເຈົ້າທັງ ເຫດສັນ.ກາຍຂອງຕົນເຈົ້າດ້ວຍຮ່າງກຽດຕໍ່ພຣະນັ້ນຈົ່ງຖວາຍພຣະ"
- **ເດີນໄປກັບຄົນອື່ນໆ.** ການເລືອກທີ່ຈະດຳລົງຊີວິດບໍລິສຸດປະຈຳວັນງ່າຍກວ່າເມື່ອທ່ານເດີນຄຽງຄູ່ໄປກັບຄົນ ອື່ນໆທີ່ເປັນຜູ້ເຊື່ອ. ອ້ອມຮອບຕົວທ່ານເອງກັບຄົນອື່ນຜູ້ທີ່ຍັງເລືອກທີ່ຈະໃຊ້ຊີວິດຂອງພວກເຂົາເພື່ອພຣະ ຄຣິສ. ກຸ່ມສຶກສາພຣະຄຳພີຂອງທ່ານແມ່ນເປັນບ່ອນເລີ້ມຕົ້ນທີ່ດີ.

ພວກເຮົາບໍ່ເຄີຍຖືກອອກແບບໃຫ້ຍັງເປັນຕົວປົ້ງຢູ່. ພຣະເຈົ້າໄດ້ໄຖ່ພວກເຮົາໄວ້ສຳລັບງານທີ່ຍິ່ງໃຫ່ຍກ່ວານັ້ນ. ສະນັ້ນ ພຣະຄຣິສຈຶ່ງປ່ຽນແປງເຮົາໃນແຕ່ລະວັນ. ພວກເຮົາຈະຕ້ອງຍອມໃຫ້ພຣະອົງສືບຕໍ່ຂະບວນການເຮັດໃຫ້ບໍລິສຸດໃນ ພວກເຮົາ.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.